ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມສະພາຜູ້ວ່າການສູນຝຶກອົບຮົມ SEACEN (SEACEN’s Board of Governors Meeting) ຄັ້ງທີ 41





ໃນວັນທີ 06 ທັນວາ 2021 ຜ່ານມານີ້, ຕ່າງໜ້າ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ທ່ານ ນ ວັດທະນາ ດາລາລອຍ ຮອງຜູ້ວ່າ ທຫລ, ພ້ອມຄະນະໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສະພາຜູ້ວ່າການສູນຝຶກອົບຮົມ SEACEN (SEACEN’s Board of Governors Meeting) ຄັ້ງທີ 41 ຜ່ານລະບົບອອນໄລ ໂດຍພາຍໃຕ້ການເປັນປະທານຂອງທ່ານ ນ. Nguyen Thi Hong ຜູ້ວ່າການທະນາຄານແຫ່ງລັດ ສ.ສ ຫວຽດນາມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ໄດ້ປຶກສາຫາລື ແລະ ຮັບຮອງ ແຜນເຄື່ອນໄຫວປະຈາປີ 2022 ຂອງສູນ SEACEN ກ່ຽວກັບການຈັດຝຶກອົບຮົມໃຫ້ແກ່ທະນາຄານກາງປະເທດສະມາຊິກ, ການຈັດສຳມະນາ ແລະ ການສ້າງບົດຄົ້ນຄວ້າ ຕິດພັນກັບການຮັກສາສະຖຽນລະພາບທາງດ້ານການເງິນ-ເງິນຕາ ຢູ່ໃນແຕ່ລະປະເທດ. ໃນກອງປະຊຸມ, ສະພາຜູ້ວ່າການສູນ SEACEN ຍັງໄດ້ມີການແລກປ່ຽນທັດສະນະຕໍ່ກັບ “ຜົນກະທົບຕໍ່ທະນາຄານກາງ ຈາກການຫັນເປັນດີຈີຕອນຂອງລະບົບການເງິນ” ຊຶ່ງເປັນຫົວຂໍ້ທີ່ກຳລັງເປັນທ່າອ່ຽງທີ່ສຳຄັນຂອງທັງພາກພື້ນ ແລະ ສາກົນ ໂດຍສະເພາະ ໃນໄລຍະການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ 19 ທີ່ຈະຕ້ອງໄດ້ມີການນຳໃຊ້ເຄື່ອງມືດິຈິຕອນ ເຂົ້າໃນການຊົມໃຊ້ການບໍລິການທາງການເງິນ. ການປ່ຽນແປງເຫຼົ່ານີ້ ໄດ້ກາຍເປັນທັງໂອກາດ ແລະ ສິ່ງທ້າທາຍ ໃຫ້ແກ່ຜູ້ຄຸ້ມຄອງຂະແໜງການເງິນ ໂດຍສະເພາະ ການຊັ່ງຊາດ້ານສະຖຽນນະພາບ ແລະ ການພັດທະນາ; ການປົກປ້ອງຜູ້ຊົມໃຊ້ ແລະ ການຮັກສາຂໍ້ມູນສ່ວນຕົວ.



ໃນຕອນທ້າຍ, ທ່ານ ຮອງຜູ້ວ່າການ ທຫລ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜູ້ບໍລິຫານສູນ SEACEN ໃນການຂັບເຄື່ອນແຜນຝຶກອົບຮົມປະຈໍາປີ 2021 ບັນລຸຕາມຄາດໝາຍ ທ່າມກາງຄວາມທ້າທາຍ ຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ພ້ອມສະເໜີ ສືບຕໍ່ສະໜັບສະໜູນທະນາຄານກາງປະເທດສະມາຊິກ ໃນການສ້າງຄວາມອາດສາມາດ ດ້ານຕ່າງໆປີ່ນອ້ອມວຽກທະນາຄານກາງ.

//ຂ່າວ-ພາບ: ກົມຮ່ວມມືສາກົນ

ຮຽບຮຽງບົດຂ່າວ: ທ ສົມພິດ ທໍາມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*